ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

*******************

ສຳນັກງານນາຍົກລັດຖະມົນຕີ

ເລກທີ...175.../ ນຍ

ນະຄອນວຽງຈັນ,ວັນທີ.....6.11.2003

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການປະກາດໃຊ້ແຜນຜັງປົກປັກຮັກສາ

## ແລະເຮັດໃຫ້ມີຄຸນຄ່າສຳລັບການອະນຸລັກເມືອງມໍລະດົກໂລກຫຼວງພະບາງ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງໃໝ່ ເລກທີ 02 /ສພຊ,ລົງວັນທີ 6 / 5 / 2003.
- ອີງຕາມກົດໝາຍວ່າດ້ວຍທີ່ດິນ .
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງເອົາກົດລະບຽບແລະຜັງເມືອງ ເມືອງຫຼວງພະບາງ ສະບັບເລກທີ 158 / ນຍ, ລົງວັນທີ 24 ສິງຫາ 1996.
- ອີງຕາມເອກະສານສະເໜີສະບັບເລກທີ 749 / ຖວ,ລົງວັນທີ 29 / 10 / 2003 ຂອງທ່ານ ລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວແລະວັດທະນະທຳ, ປະທານ ຄະນະກຳມະການມໍລະດົກແຫ່ງຊາດ.

## ນາຍົກລັດຖະມົນຕີ ອອກດຳລັດ :

<u>ມາດຕາ 1</u> : ອະນຸມັດນຳໃຊ້

1. ແຜນຜັງປົກປັກຮັກສາ ແລະ ເຮັດໃຫ້ມີຄຸນຄ່າສຳລັບເມືອງຫຼວງພະບາງ ທີ່ເປັນເມືອງມໍລະດົກໂລກ, ເຊິ່ງມີເນື້ອໃນດັ່ງລຸ່ມນີ້:
   - 1.1 ບົດລາຍງານສະເໜີ.
   - 1.2 ກົດລະບຽບ.
   - 1.3 ບັນຊີເຮືອນມໍລະດົກທີ່ອະນຸລັກ.
   - 1.4 ບັນຊີວັດທີ່ປົກປັກຮັກສາ.
   - 1.5 ປຶ້ມແນະນຳ ( ນຳເບີ້ I ຫາ VIII ).
2. ເຂດແດນອະນຸລັກມໍລະດົກ ໂດຍຜ່ານ :

- <u>ທິດເໜືອ</u> : ນັບຕັ້ງແຕ່ບ້ານນາຄໍາ ລຽບໄປຕາມເສັ້ນລະດັບຄວາມສູງ 300 ແມັດ ຂອງ ພູທ້າວ ພູນາງ ຂະໜານກັນກັບ ແມ່ນ້ຳຂອງ ລົງໄປເຖິງ ບໍລິເວນບ້ານຈ່ານ.

- <u>ທິດຕາເວັນອອກ</u> : ນັບຕັ້ງແຕ່ບ້ານນາຄໍາ ລັດໃສ່ແຄມແມ່ນ້ຳຂອງ ແລະ ຂ້າມນ້ຳຂອງ ຕໍ່ໃສ່ບ້ານໂພນສະອາດເສັ້ນທາງທີ່ຕິດຕໍ່ ລະຫວ່າງ ບ້ານໂພນສະອາດ, ບ້ານພັນຫຼວງ ແລະ ບ້ານເມືອງງາ.

- <u>ທິດຕາເວັນຕົກ</u> : ນັບຕັ້ງແຕ່ເສັ້ນທາງໂຮງແຮມພູວ່າວ ທາເດີ່ນກິລາແລ້ວ ປ່ອງໃສ່ແຄມນ້ຳຂອງ ທີ່ວັດພະບາດໃຕ້ ຂ້າມແມ່ນ້ຳຂອງໄປຫາບ້ານຈ່ານ.

- <u>ທິດໃຕ້</u> : ນັບຕັ້ງແຕ່ບ້ານເມືອງງາ ຂ້າມນ້ຳຄານ ລັດໃສ່ບ້ານມີ້ນນາ, ລັດໃສ່ໂຮງແຮມພູວ່າວ.

3. ແຜນຜັງແບ່ງເຂດອະນຸລັກຕົວເມືອງຫຼວງພະບາງ, ເຊິ່ງມີ ລະອຽດຄືດັ່ງລຸ່ມນີ້:

- ເຂດ ZPP ເປັນເຂດອະນຸລັກເຊິ່ງມີ ເນື້ອທີ່ທັງໝົດ 780,53 ເຮັກຕາ.

| | | | | |
|---|---|---|---|---|
| ໃນນັ້ນ : | ZPP-Ua | ມີເນື້ອທີ່ | 67,12 | ເຮັກຕາ. |
| | ZPP-Ub | ມີເນື້ອທີ່ | 151,32 | ເຮັກຕາ. |
| | ZPP-N | ມີເນື້ອທີ່ | 545,66 | ເຮັກຕາ. |
| | ZPP-M | ມີເນື້ອທີ່ | 16,43 | ເຮັກຕາ. |

**<u>ມາດຕາ 2:</u>** ມອບໃຫ້ແຂວງຫຼວງພະບາງສົມທົບກັບກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ກະຊວງຖະແຫຼງຂ່າວ ແລະ ວັດທະນະທໍາ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດແຜນຜັງຊີ້ນໍາລວມດັ່ງກ່າວ ໃຫ້ປະກົດຜົນເປັນຈິງ.

**<u>ມາດຕາ 3</u>:** ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງວຽງຈັນ, ເຂດພິເສດ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ດໍາລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**<u>ມາດຕາ 4</u>:** ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ . ທຸກຂໍ້ກໍານົດ ແລະ ລະບຽບການທີ່ຂັດກັບເນື້ອໃນດໍາລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ